**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 3736 /ກງ

ນະຄອນຫລວງວຽງຈັນ, ວັນທີ 25 ພະຈິກ 2022

**ຄຳແນະນຳ**

**ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023**

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 13/ສພຊ, ລົງວັນທີ 17 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021.

**ລັດຖະມົນຕີກະຊວງການເງິນ**
**ອອກຄຳແນະນຳ ດັ່ງນີ້:**

## I. ຈຸດປະສົງ

ເພື່ອຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມສະພາແຫ່ງຊາດໃຫ້ປະກົດຜົນເປັນຈິງ ແລະ ສາມາດບັນລຸໄດ້ຕາມຄາດໝາຍ ແລະ ລື່ນຄາດໝາຍ ດ້ວຍການນຳໃຊ້ທຸກມາດຕະການ ໃນການເພີ່ມທະວີການຄຸ້ມຄອງ ແລະ ຕ້ານທຸກຊ່ອງວ່າງຂອງການຮົ່ວໄຫຼລາຍຮັບງົບປະມານແຫ່ງລັດ, ຈັດເກັບລາຍຮັບໃຫ້ຄົບຖ້ວນ, ໂປ່ງໃສ ແລະ ປະຕິບັດລາຍຈ່າຍ ຕາມທິດຕ້ານການຟູມເຟືອຍ ແລະ ຮັບປະກັນລາຍຈ່າຍຢ່າງມີປະສິດທິຜົນສູງສຸດ ຮັບປະກັນປະຕິບັດວິໄນແຜນການ-ການເງິນໃຫ້ເຂັ້ມງວດ ແນ່ໃສ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານການເງິນ-ງົບປະມານ ໃຫ້ຜ່ອນຄາຍລົງເປັນເທື່ອລະກ້າວ ເຮັດໃຫ້ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ.

## II. ທິດທາງລວມ

1. ສູ້ຊົນຈັດຕັ້ງປະຕິບັດ 5 ວຽກຈຸດສຸມ ແລະ 14 ມາດຕະການທີ່ກຳນົດໄວ້ໃນມະຕິສະພາແຫ່ງຊາດ ເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ເປັນຮູບປະທຳ;
2. ສູ້ຊົນຈັດຕັ້ງປະຕິບັດ ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021, ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023;
3. ສູ້ຊົນຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021 ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານໃນທຸກຮູບແບບ;
4. ສູ້ຊົນຈັດຕັ້ງປະຕິບັດມະຕິຕົກລົງຂອງລັດຖະບານ ສະບັບເລກທີ 07/ລບ, ລົງວັນທີ 4 ຕຸລາ 2021 ວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍມະຕິຂອງສະພາແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ;
5. ສູ້ຊົນຫັນເອົາການຄຸ້ມຄອງລາຍຮັບດ້ວຍລະບົບທັນສະໄໝ ໃຫ້ກວມເອົາທຸກການຈັດເກັບລາຍຮັບເຂົ້າງົບປະມານໃນຂອບເຂດທົ່ວປະເທດ;

6. ສູ້ຊົນຫັນເອົາການຄຸ້ມຄອງລາຍຈ່າຍງົບປະມານໄປທັນສະໄໝ ໃນບາງປະເພດລາຍຈ່າຍ ໃນຂອບເຂດທົ່ວປະເທດ;
7. ເສີມຂະຫຍາຍຄວາມຮັບຜິດຊອບຂອງຂະແໜງການສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອປະຕິບັດວິໃນການເງິນຢ່າງເຂັ້ມງວດ;
8. ສູ້ຊົນຈັດຕັ້ງປະຕິບັດດຳລັດ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022 ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດ ແລະ ປະຢັດຕ້ານການຟຸມເຟືອຍ ໃຫ້ເປັນຮູບປະທຳ;
9. ສູ້ຊົນປະຕິບັດ ດຳລັດ ສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍລົດຂອງລັດ ແລະ ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0393/ກງ, ລົງວັນທີ 4 ກຸມພາ 2022 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ລົດບໍລິຫານຂອງລັດ ໃຫ້ເປັນຮູບປະທຳ;
10. ສູ້ຊົນປະຕິບັດ ດຳລັດ ສະບັບເລກທີ 280/ລບ, ລົງວັນທີ 9 ສິງຫາ 2022 ວ່າດ້ວຍຊັບສິນຖືກຍຶດ, ຖືກອາຍັດ ແລະ ຮິບເປັນຂອງລັດ;
11. ສ້າງນະໂຍບາຍການເງິນ ເພື່ອສົ່ງເສີມການຜະລິດພາຍໃນຕາມທິດ ສ້າງຖານລາຍຮັບໃໝ່ ເພື່ອສ້າງລາຍຮັບໃຫ້ເພີ່ມຂຶ້ນ ລາຍຮັບປົກກະຕິພາຍໃນກຸ້ມລາຍຈ່າຍພາຍໃນ ແລະ ມີສ່ວນທີ່ເຫຼືອເພື່ອຊຳລະໜີ້ສິນໃຫ້ຫຼຸດລົງ ເທື່ອລະກ້າວ ຫຼຸດຜ່ອນການກູ້ຢືມໃໝ່ ດ້ວຍການນຳໃຊ້ກົນໄກຕ່າງໆ ໃນການຂຸດຄົ້ນທ່າແຮງບົ່ມຊ້ອນທາງດ້ານພູມສາດ, ຊັບພະຍາກອນ ແລະ ອື່ນໆ; ພ້ອມທັງ ສ້າງນະໂຍບາຍການເງິນ ໃຫ້ກົມກຽວກັບນະໂຍບາຍເງິນຕາ ເພື່ອສູ້ຊົນແກ້ໄຂໄພເງິນເຟີ້, ລາຄາສິນຄ້າ ແລະ ບໍລິການໃຫ້ດີຂຶ້ນ;
12. ສູ້ຊົນຮັບປະກັນບໍລິຫານໜີ້ສິນສາທາລະນະ ໃຫ້ຢູ່ໃນລະດັບຄວາມປອດໄພ ແລະ ເດັດຂາດບໍ່ໃຫ້ປະເທດຕົກເຂົ້າເປັນປະເທດ ທີ່ບໍ່ສາມາດຊຳລະໜີ້ສິນໄດ້ຕາມຂໍ້ຜູກພັນສັນຍາ ແລະ ຍົກລະດັບຄວາມໜ້າເຊື່ອຖື ຂອງ ສປປ ລາວ ໃຫ້ສູງຂຶ້ນ;
13. ສືບຕໍ່ແກ້ໄຂຂໍ້ຄົງຄ້າງ ຕາມຄຳແນະນຳຂອງອົງການກວດສອບແຫ່ງລັດ ຢ່າງຕັ້ງໜ້າ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກຳນົດມາດຕະການ, ວິທີການແກ້ໄຂຂໍ້ຄົງຄ້າງໃຫ້ເປັນຮູບປະທຳໃນແຕ່ລະໄລຍະ ແລະ ກ້າວໄປສູ່ການແກ້ໄຂຢ່າງຂາດຕົວ.

## III. ຄາດໝາຍສູ້ຊົນໃນແຕ່ລະດ້ານ ປີ 2023

### 1. ຄາດໝາຍທາງດ້ານລາຍຮັບງົບປະມານ ປີ 2023

ລາຍຮັບທັງໝົດ 38.448 ຕື້ກີບ ເທົ່າກັບ 16,42% ຂອງ GDP (ມູນຄ່າ GDP 234.160 ຕື້ກີບ), ໃນນັ້ນ:

- ລາຍຮັບພາຍໃນ 34.898 ຕື້ກີບ;
- ລາຍຮັບການຊ່ວຍເຫຼືອລ້າ 3.550 ຕື້ກີບ.

### 2. ຄາດໝາຍສູ້ຊົນແຜນລາຍຈ່າຍງົບປະມານ ປີ 2023

ລາຍຈ່າຍທັງໝົດ 43.498 ຕື້ກີບ ເທົ່າກັບ 18,58% ຂອງ GDP ໃນນັ້ນ:

- ລາຍຈ່າຍບໍລິຫານປົກກະຕິ 29.030 ຕື້ກີບ;
- ລາຍຈ່າຍລົງທຶນ 14.468 ຕື້ກີບ, ໃນນີ້:
  + ລາຍຈ່າຍລົງທຶນພາຍໃນ 4.318 ຕື້ກີບ, ໃນນີ້:
    • ລາຍຈ່າຍລົງທຶນປົກກະຕິ 2.500 ຕື້ກີບ;
    • ລາຍຈ່າຍລົງທຶນບ້ວງອື່ນໆ 1.818 ຕື້ກີບ.
  + ລາຍຈ່າຍລົງທຶນຕ່າງປະເທດເປັນໂຄງການ 10.150 ຕື້ກີບ, ໃນນັ້ນ:
    • ລາຍຈ່າຍຊ່ວຍເຫຼືອລ້າເປັນໂຄງການ 3.550 ຕື້ກີບ;
    • ລາຍຈ່າຍກູ້ຢືມເປັນໂຄງການ 6.600 ຕື້ກີບ.

**3. ການຂາດດຸນງົບປະມານ** 5.050 ຕື້ກີບ ເທົ່າກັບ 2,16% ຂອງ GDP (ມູນຄ່າ GDP 234.160 ຕື້ກີບ).

**4. ພາກດຸນດ່ຽງ:**

(1) ຄວາມຕ້ອງການແຫຼ່ງດຸນດ່ຽງທັງໝົດ 41.152 ຕື້ກີບ, ໃນນັ້ນ:

- ການດຸນດ່ຽງງົບປະມານ 5.050 ຕື້ກີບ;
- ທົດແທນຄືນຕົ້ນທຶນເງິນກູ້ຢືມພາຍໃນ ແລະ ຕ່າງປະເທດ ຈຳນວນ 36.102 ຕື້ກີບ; ໃນນັ້ນ:

(2) ແຫຼ່ງທຶນເພື່ອດຸ່ນດ່ຽງທັງໝົດ 41.152 ຕື້ກີບ ໃນນັ້ນ:

- ແຫຼ່ງທຶນ ພາຍໃນ 10.950 ຕື້ກີບ;
- ແຫຼ່ງທຶນຈາກຕ່າງປະເທດ 30.202 ຕື້ກີບ ໃນນັ້ນ:
  + ກູ້ຢືມເປັນໂຄງການ 6.600 ຕື້ກີບ;
  + ແຫຼ່ງດຸ່ນດ່ຽງ 23.602 ຕື້ກີບ.

## IV. ມາດຕະການຈັດຕັ້ງປະຕິບັດ

### 1. ມາດຕະການທາງດ້ານລາຍຮັບ

1) ຜັນຂະຫຍາຍບັນດາທິດທາງ, ຄາດໝາຍສູ້ຊົນທີ່ກຳນົດໄວ້ຂ້າງເທິງ ເປັນໂຄງການ, ແຜນງານ ເປັນອັນລະອຽດຂອງບັນດາກົມ ແລະ ທຽບເທົ່າ ແລະ ຂະແໜງການເງິນຂັ້ນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດບັນດາຄາດໝາຍໃຫ້ໄດ້ຕາມແຜນການ ແລະ ລື່ນແຜນການ;
2) ເພີ່ມທະວີການໂຄສະນາເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ເລິກເຊິ່ງທົ່ວເຖິງ ທົ່ວສັງຄົມ ດ້ວຍວິທີການກົນໄກຕ່າງໆ ເພື່ອໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ;
3) ຂະຫຍາຍການຄຸ້ມຄອງຖານລາຍຮັບ ດ້ວຍລະບົບຖານຂໍ້ມູນໃຫຍ່ລວມສູນທັນສະໄໝ ໃນຂອບເຂດທົ່ວປະເທດ;
4) ຍົກລະດັບ ແລະ ພັດທະນາລະບົບຄຸ້ມຄອງສ່ວຍສາອາກອນທັນສະໄໝ (TAXRIS) ໃຫ້ກວມລວມໃນທຸກຂົງເຂດທີ່ມີການຄຸ້ມຄອງ ແລະ ຈັດເກັບລາຍຮັບ ດັ່ງນີ້:

- ສູ້ຊົນທັນເອົາຫົວໜ່ວຍທຸລະກິດທີ່ມີທະບຽນເຄື່ອນໄຫວທຸລະກິດ ໃຫ້ເຂົ້າຢູ່ໃນຖານຄຸ້ມຄອງອາກອນທັນສະໄໝໃຫ້ສຳເລັດໃນຂອບເຂດທົ່ວປະເທດ;
- ຕິດຕັ້ງນຳໃຊ້ລະບົບແທັກລິດ ໃຫ້ກວມເອົາທັງໝົດ 148 ເມືອງໃນຂອບເຂດທົ່ວປະເທດ ແລະ 6 ເຂດເສດຖະກິດພິເສດ ເພື່ອໃຫ້ລະບົບ TAXRIS ໄດ້ຖືກນຳໃຊ້ທຸກເມືອງ;
- ພັດທະນາຫ້ອງຄວບຄຸມລະບົບສ່ວຍສາອາກອນທັນສະໄໝທັງໝົດ, ເຊິ່ງມີ: ຈໍສະແດງຜົນ, ບົດສະຫຼຸບລາຍງານການຈັດເກັບລາຍຮັບແບບອອນລາຍ ທັນສະພາບການ;
- ສູ້ຊົນໃຫ້ຫົວໜ່ວຍທຸລະກິດທີ່ມີເງື່ອນໄຂເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ໃຫ້ໄດ້ຈຳນວນ 4.538 ຫົວໜ່ວຍໃນປີ 2023, ພ້ອມທັງປັບປຸງຫົວໜ່ວຍທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມແລ້ວ ໃຫ້ໄດ້ຕາມມາດຕະຖານເຊັ່ນ: ຖືບັນຊີຕາມມາດຕະຖານ, ມີໃບຢັ້ງຢືນການເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ແລະ ການເຂົ້າຢູ່ໃນລະບົບການຄຸ້ມຄອງອາກອນທັນສະໄໝ;
- ຕິດຕັ້ງລະບົບຄຸ້ມຄອງເກັບລາຍຮັບຄ່າທຳນຽມ, ຄ່າບໍລິການ ໃຫ້ກວມລວມເອົາທຸກຫົວໜ່ວຍງົບປະມານ ທີ່ມີລາຍຮັບວິຊາການ ແລະ ທັນການຊຳລະສະສາງອາກອນ ແລະ ຄ່າທຳນຽມທຸກປະເພດຜ່ານລະບົບທະນາຄານ ບ່ອນທີ່ມີເງື່ອນໄຂ ແລະ ຫ້າມພະນັກງານໄປເກັບເງິນໂດຍກົງນຳຫົວໜ່ວຍທຸລະກິດ. ຍົກເວັ້ນກໍລະນີທີ່ໄດ້ຮັບອະນຸຍາດຈາກກົມສ່ວຍສາອາກອນ;
- ຜັນຂະຫຍາຍການຊຳລະອາກອນຜ່ານລະບົບທະນາຄານ ແລະ ມືຖື FINLINK (ຍົກລະດັບລະບົບ EasyTax ໃຫ້ເປັນ FINLINK);
- ປະສານສົມທົບກັບ ກະຊວງພາຍໃນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງປ້ອງກັນຄວາມສະຫງົບ ເພື່ອເຊື່ອມໂຍງຂໍ້ມູນ ບັດພະນັກງານ, ບັດປະຊາຊົນ ແລະ ບັດອອກແຮງງານ ເພື່ອອອກເລກປະຈຳຕົວຜູ້ເສຍອາກອນຕາມລະບົບຄຸ້ມຄອງອາກອນທັນສະໄໝ (TAXRIS);

- ປະສານສົມທົບກັບ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເຊື່ອມໂຍງຖານຂໍ້ມູນທີ່ດິນ, ຖານຂໍ້ມູນລາຄາເຂດປະເມີນລາຄາຕອນດິນ ແລະ ການປ່ຽນແປງສິດນຳໃຊ້ຕອນດິນ ດ້ວຍລະບົບຄຸ້ມຄອງອາກອນທັນສະໄໝ (TAXRIS);
- ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອເຊື່ອມໂຍງຂໍ້ມູນພາຫະນະ ເພື່ອຄຸ້ມຄອງຈັດເກັບຄ່າທຳນຽມນຳໃຊ້ພາຫະນະປະຈຳປີ ດ້ວຍລະບົບຄຸ້ມຄອງອາກອນທັນສະໄໝ (TAXRIS);
- ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ທະນາຄານແຫ່ງ ສປປ ລາວ ເພື່ອເຊື່ອມໂຍງຖານຂໍ້ມູນກ່ຽວກັບ ການອອກອະນຸຍາດດຳເນີນທຸລະກິດ, ບັນຊີເງິນຝາກ ແລະ ອື່ນໆ ດ້ວຍລະບົບຄຸ້ມຄອງອາກອນທັນສະໄໝ (TAXRIS);
- ປະສານສົມທົບກັບ ບັນດາກະຊວງ, ອົງການທຽບເທົ່າ ເພື່ອນຳໃຊ້ເຄື່ອງມືທັນສະໄໝໃນການຄຸ້ມຄອງຈັດເກັບ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ກຳນົດໄວ້ໃນລັດຖະບັນຍັດ 02 ຂອງປະທານປະເທດ;
- ການຈັດເກັບພາສີທີ່ດິນ ແລະ ຄ່າທຳນຽມທາງ ໃຫ້ປະຕິບັດດັ່ງນີ້:
  + ຊຳລະຜ່ານລະບົບເກັບພາສີທີດິນ ແລະ ຄ່າທຳນຽມທາງ ຕາມລະບົບທີ່ນຳໃຊ້ຢູ່ປະຈຸບັນ ບ່ອນທີ່ມີເງື່ອນໄຂ;
  + ມອບໃຫ້ການເງິນບ້ານ ຫຼື ອົງການປົກຄອງທ້ອງຖິ່ນຂັ້ນບ້ານ ດຳເນີນການເກັບກຳຖານຂໍ້ມູນ ແລະ ຈັດເກັບພາສີທີ່ດິນ, ຄ່າທຳນຽມທາງ ຕາມລະບຽບ ແລະ ແບບຟອມຂອງກົມສ່ວຍສາອາກອນທີ່ໄດ້ກຳນົດອອກ ໃຫ້ໄດ້ຄົບຖ້ວນແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ (ສຳລັບການແບ່ງລາຍຮັບໃຫ້ບ້ານຈະມີນິຕິກຳສະເພາະ);
  + ຈັດເກັບອາກອນລາຍໄດ້ ຈາກການໂອນສິດນຳໃຊ້ທີ່ດິນ ແລະ ຄ່າທຳນຽມຕິດພັນກັບການຄຸ້ມຄອງທີ່ດິນ ຜ່ານລະບົບທະນາຄານ ແລະ ຜ່ານລະບົບມືຖື ໃນຂອບເຂດທົ່ວປະເທດບ່ອນທີ່ມີເງື່ອນໄຂ ຕາມລາຄາຊື້-ຂາຍຕໍ່າສຸດບໍ່ໃຫ້ຫຼຸດລາຄາເຂດປະເມີນ ທີ່ສະພາປະຊາຊົນແຂວງ, ນະຄອນຫຼວງ ຮັບຮອງ;
- ປະສານສົມທົບກັບຂະແໜງການກ່ຽວຂ້ອງ ລົງກວດກາ, ເກັບກຳຂໍ້ມູນ ແລະ ຂຸດຄົ້ນແຫຼ່ງລາຍຮັບທີ່ບົ່ມຊ້ອນ ແລະ ແຫຼ່ງລາຍຮັບໃໝ່ ໂດຍສະເພາະ ຫົວໜ່ວຍທຸລະກິດທີ່ເປັນລັກສະນະຍຸດທະສາດ, ເຂດໂລຈິດສະຕິກ ແລະ ເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ;
- ຍົກສູງຄວາມຮັບຜິດຊອບໃນການຊຸກຍູ້, ຕິດຕາມ, ກວດກາ ບັນດາຖານລາຍຮັບທີ່ນອນໃນຄວາມຮັບຜິດຊອບຂອງຕົນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມຕົວຈິງ ເພື່ອອັດທຸກຊ່ອງວ່າງການຮົ່ວໄຫຼຂອງງົບປະມານ ພ້ອມທັງສົມທົບກັບຂະແໜງທີ່ກ່ຽວຂ້ອງ ອອກມາດຕະການ ເພື່ອຮັບປະກັນການບັງຄັບໃຊ້ກົດໝາຍ ໃຫ້ເຂັ້ມງວດ.
- ເພີ່ມທະວີການລົງແນະນຳ, ຕິດຕາມ, ກວດກາ 9 ແຂວງ ທີ່ໄດ້ມອບຫົວໜ່ວຍຂະໜາດໃຫຍ່ ໃຫ້ແຂວງຄຸ້ມຄອງ ເພື່ອຮັບປະກັນ ໃຫ້ສາມາດເກັບລາຍຮັບ ໄດ້ຕາມແຜນການຫລື ລື່ນແຜນການທີ່ກຳນົດໄວ້.

5) ຍົກລະດັບພັດທະນາລະບົບຄຸ້ມຄອງພາສີເປັນທັນສະໄໝ ໃຫ້ກວມລວມບັນດາດ່ານ ເພື່ອຄຸ້ມຄອງ ແລະ ຈັດເກັບລາຍຮັບ ດັ່ງນີ້:

- ຍົກລະດັບລະບົບ ຜັນຂະຫຍາຍລະບົບ ແຈ້ງພາສີປະຖູດຽວແຫ່ງຊາດ ASYCUDA ກັບລະບົບ NSWA+ (National Single Window) ເພື່ອຄຸ້ມຄອງການແຈ້ງພາສີແບບອີເລັກໂຕນິກ ເພື່ອຄຸ້ມຄອງການແຈ້ງພາສີໃຫ້ຄວບຄຸມຢູ່ບັນດາດ່ານສາກົນ ໃນຂອບເຂດທົ່ວປະເທດ ແລະ ກຳນົດເງື່ອນໄຂການປະກອບຂໍ້ມູນຫຼັກຖານການແຈ້ງພາສີເປັນລາຍລະອຽດ ເຊັ່ນ: ໃບຢັ້ງຢືນ ຫຼື ຕິດຕາມການຖືບັນຊີປະຈຳປີ, ໃບຢັ້ງຢືນເຂົ້າສູ່ລະບົບອາກອນມູນຄ່າເພີ່ມ, ໃບຢັ້ງຢືນການມອບອາກອນປະຈຳປີ ແລະ ການຊຳລະສະສາງຜ່ານລະບົບທະນາຄານ ຜ່ານແອັບ FINLINK, ເຊື່ອມຕໍ່ລະບົບຊັ່ງຊັ່ງທັນສະໄໝ ແບບອັດຕະໂນມັດ, ເຊື່ອມຕໍ່ລະບົບລາຍງານການນຳໃຊ້ສະແກນເນີ້ ສາຍແສງຢູ່ດ່ານພາສີສາກົນທີ່ມີລະບົບ, ເຊື່ອມຕໍ່ລະບົບແຈ້ງພາສີປະຖູດຽວອາຊຽນ ແລະ ອື່ນໆ;
- ພັດທະນາລະບົບຄຸ້ມຄອງຕິດຕາມການກວດປ່ອຍສິນຄ້າ, ລະບົບຕິດຕາມລົດບັນທຸກ, ຕູ້ສິນຄ້າພາຍໃນ ແລະ ຜ່ານແດນ ແບບດິຈິຕອນ (iGate/ECTS) ຢູ່ດ່ານພາສີສາກົນທັງໝົດ, ເຊື່ອມຕໍ່ລະບົບຄຸ້ມຄອງພາຫະນະນຳ

ເຂົ້າທ່ອງທ່ຽວຢ້ຽມຢາມ ແລະ ຂົນສົ່ງສິນຄ້າ ບໍ53. ພ້ອມໃຊ້ ຄຸ້ມຄອງການເຄື່ອນຍ້າຍສິນຄ້າທົ່ວໄປ, ສິນຄ້າປະເພດນໍ້າມັນເຊື້ອໄຟ ແລະ ການລົງສາງສິນຄ້າ ເພື່ອຕອບສະໜອງວຽກງານພະແນກ ສືບສວນ-ສອບສວນ ແລະ ປາບປາມການລັກລອບໜີພາສີ;

- ພັດທະນາລະບົບ ບໍລິຫານຈັດການ-ຄຸ້ມຄອງ ວຽກງານປອດພາສີ ແລະ ຮ້ານຄ້າປອດພາສີ;
- ຜັນຂະຫຍາຍ ລະບົບເກັບຄ່າທຳນຽມ ແລະ ຄ່າບໍລິການຜ່ານທະນາຄານ (Easy Pass)ໃຫ້ກວມລວມຂະແໜງການທີ່ກ່ຽວຂ້ອງທັງໝົດ ຢູ່ດ່ານພາສີສາກົນໃນຂອບເຂດທົ່ວປະເທດ;
- ສຳຫຼວດ, ອອກແບບ ແລະ ປັບປຸງລະບົບເຄືອຂ່າຍ, ຕິດຕັ້ງເຄື່ອງແມ່ຂ່າຍ ເຊີເວີ ຢູ່ສູນກາງ, ອຸປະກອນຄອມພິວເຕີ ທີ່ໝົດອາຍຸການນຳໃຊ້ ຢູ່ບັນດາຫ້ອງການພາສີ, ດ່ານພາສີ ໃນຂອບເຂດທົ່ວປະເທດ;
- ສ້າງຕັ້ງສູນບັນຊາການທາງພາສີ ເພື່ອຄວບຄຸມ, ຕິດຕາມ, ກວດກາ ການປະຕິບັດໜ້າທີ່ຂອງພະນັກງານ ແລະ ການເຂົ້າ-ອອກຂອງພາຫະນະ ແລະ ຜູ້ໂດຍສານ ຢູ່ບັນດາດ່ານສາກົນ ເຊັ່ນ: ດ່ານວັງເຕົ່າ, ຂົວມິດຕະພາບ 1,2,3 ແລະ 4, ດ່ານບໍ່ເຕັນ, ດ່ານແດນສະຫວັນ, ດ່ານນໍ້າພາວ, ດ່ານນາພ້າວ, ດ່ານນໍ້າກັ່ນ, ດ່ານນໍ້າໂສຍ, ດ່ານນໍ້າເຫືອງ;
- ພັດທະນາລະບົບຕິດຕາມການຂົນສົ່ງ ດ້ວຍການນຳໃຊ້ເຄື່ອງມືທັນສະໄໝ (E Seal, GPS);

6) ຍົກລະດັບພັດທະນາລະບົບຄຸ້ມຄອງຊັບສິນແຫ່ງລັດເປັນທັນສະໄໝ ໃຫ້ກວມລວມໃນທຸກຂົງເຂດທີ່ມີການຄຸ້ມຄອງ ແລະ ຈັດເກັບລາຍຮັບ ດັ່ງນີ້:
   - ຍົກລະດັບລະບົບຄຸ້ມຄອງຊັບສິນແຫ່ງລັດ (AMIS) ໄລຍະ2 ເຊື່ອມຕໍ່ຫາບັນດາກະຊວງທັງໝົດ ເພື່ອຄຸ້ມຄອງຖານລາຍຮັບເປັນຕົ້ນ: ຄ່າພາກຫຼວງ, ຄ່າຊັບພະຍາກອນ, ຄ່າເຊົ່າ-ຄ່າສຳປະທານ, ເຊື່ອຕໍ່ຫາກະຊວງແຜນການ ແລະ ການລົງທຶນ ເພື່ອອະນຸມັດ, ເຊັນສັນຍາ, ປະເມີນ ແລະ ເກັບລາຍຮັບຈາກໂຄງການສຳປະທານບໍ່ແຮ່ ເຂື່ອໄຟຟ້າ ແລະ ອື່ນໆ;
   - ຍົກລະດັບລະບົບການຈົດທະບຽນແບບອີເລັກໂຕຣນິກ STR ໄລຍະ 2 ໃຫ້ເພີ່ມໄປສູ່ປະເພດຊັບສິນອື່ນໆ ໃຫ້ຫຼາຍຂຶ້ນ ເຊື່ອມຕໍ່ລະບົບຊຳລະສະສາງ ແລະ ລະບົບ CIB ຂອງທະນາຄານແຫ່ງ ສປປ ລາວ;
   - ພັດທະນາລະບົບຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ລວມສູນແບບອີເລັກໂຕຣນິກ (e-PP) ຜ່ານເວັບໄຊ ໃຫ້ເລິກເຊິ່ງທົ່ວເຖິງ ແລະ ກວ້າງຂວາງ;
   - ເພີ່ມທະວີການຕິດຕາມ, ກວດກາ, ການລັກລອບຊັບສິນຂອງລັດ ລວມທັງການເຄື່ອນຍ້າຍຊັບພະຍາກອນພາຍໃນ ແລະ ສົ່ງອອກຕ່າງປະເທດ ຢ່າງເຂັ້ມງວດ;

7) ສຸມໃສ່ເກັບກຳຂໍ້ມູນ ແລະ ຂຸດຄົ້ນແຫຼ່ງລາຍຮັບທີ່ບົ່ມຊ້ອນ ໂດຍສະເພາະ ທຸລະກິດ ຂະແໜງພະລັງງານ ແລະ ບໍ່ແຮ່, ຫົວໜ່ວຍທຸລະກິດທີ່ເປັນລັກສະນະຍຸດທະສາດ ແລະ ເຂດເສດຖະກິດພິເສດ. ສືບຕໍ່ອຳນວຍຄວາມສະດວກໃຫ້ຫົວໜ່ວຍທຸລະກິດທີ່ໄດ້ຮັບອະນຸຍາດສົ່ງອອກແຮ່ທາດ, ຫົວໜ່ວຍທຸລະກິດຂຸດຄົ້ນເງິນຄຣິບໂຕ ແລະ ສູນຊື້-ຂາຍ ຄຣິບໂຕ ໃນການມອບລາຍຮັບເຂົ້າງົບປະມານ ຕາມສັນຍາທີ່ໄດ້ຕົກລົງກັບລັດຖະບານ;

8) ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້ານະໂຍບາຍເອື້ອອຳນວຍ ໃຫ້ແກ່ຂະແໜງການບໍລິການ ແລະ ທ່ອງທ່ຽວ ໂດຍຖືເອົາໂອກາດທີ່ ສປປ ລາວ ຕິດອັນດັບໜຶ່ງໃນ 25 ສະຖານທີ່ທ່ອງທ່ຽວຂອງໂລກ ແລະ ໜຶ່ງດຽວຂອງປະເທດອາຊຽນ ເປັນປະເທດທີ່ໜ້າທ່ອງທ່ຽວທີ່ສຸດໃນໂລກ ເພື່ອຊຸກຍູ້ການທ່ອງທ່ຽວ ເປັນພື້ນຖານໃຫ້ແກ່ການເກັບລາຍຮັບເຂົ້າງົບປະມານໃຫ້ມີຄວາມຍືນຍົງ;

9) ເພີ່ມທະວີການກວດກາ, ຕ້ານ, ສະກັດກັ້ນການລັກລອບໜີພາສີພາຍໃນ ແລະ ນອກດ່ານພາສີຊາຍແດນ, ການຄ້າຂາຍເຖື່ອນ; ລວມທັງຕິດຕາມ, ກວດກາ ແລະ ຄຸ້ມຄອງ ການນຳເຂົ້າ-ສົ່ງອອກສິນຄ້າ ໃນການແຈ້ງພາສີເປັນລາຍລະອຽດ ຊຳລະຜ່ານລະບົບທະນາຄານ;

10) ສືບຕໍ່ດຳເນີນການປະຕິຮູບລັດວິສາຫະກິດ ເພື່ອເປັນທ່າແຮງທີ່ສຳຄັນ ໃນການສ້າງລາຍຮັບເຂົ້າງົບປະມານໃຫ້ມີຄວາມຍືນຍົງ ຕາມແຜນທີ່ໄດ້ກຳນົດໄວ້;

11) ຍົກສູງຄວາມຮັບຜິດຊອບໃນການຊຸກຍູ້, ຕິດຕາມ, ກວດກາ ບັນດາຖານລາຍຮັບທີ່ມອບໃນຄວາມຮັບຜິດຊອບຂອງຕົນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມຕົວຈິງ ເພື່ອອັດທຸກຊ່ອງວ່າງການຮົ່ວໄຫຼຂອງງົບປະມານ ພ້ອມທັງ ສົມທົບກັບຂະແໜງທີ່ກ່ຽວຂ້ອງ ອອກມາດຕະການໃນການຂະຫຍາຍ ແລະ ສ້າງຖານລາຍຮັບໃໝ່ ໃຫ້ເປັນແຫຼ່ງທີ່ໝັ້ນຄົງໃນຕໍ່ໜ້າ;

12) ເລັ່ງທວງເກັບຄືນລາຍຮັບ ແລະ ພັນທະຕ່າງໆ ຈາກເຄື່ອງຮັບ, ຈາກຄະດີຕ່າງໆ ທີ່ໄດ້ຜ່ານການຕັດສິນຂອງສານຂັ້ນຕ່າງໆ ລວມທັງລາຍຮັບທີ່ຄ້າງມອບຈາກການກວດເຫັນເພີ່ມຕາມຜົນກວດສອບ-ກວດກາ ນຳຫົວໜ່ວຍງົບປະມານ, ຫົວໜ່ວຍທຸລະກິດ ໃຫ້ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ;

13) ບັນດາຂະແໜງການທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ໃຫ້ປະຕິບັດຕາມ ມາດຕາ 10 ຂອງ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 13/ສພຊ, ລົງວັນທີ 17 ພະຈິກ 2021. ສຳລັບຫົວໜ່ວຍບໍລິຫານວິຊາການກຸ້ມຕົນເອງດ້ານງົບປະມານ ໃຫ້ປະຕິບັດຕາມ ຄຳແນະນຳ 2258/ກງ, ລົງວັນທີ 21 ພຶດສະພາ 2021, ສ່ວນກອງທຶນຂອງລັດ ໃຫ້ປະຕິບັດຕາມ ດຳລັດຂອງກອງທຶນຂອງຕົນ, ກໍລະນີດຳລັດທີ່ບໍ່ມີລະບຽບການນຳໃຊ້ງົບປະມານ ຫຼື ກອງທຶນທີ່ບໍ່ມີດຳລັດ ໃຫ້ປະຕິບັດຕາມ ຄຳແນະນຳ ສະບັບເລກທີ 0016/ກງ, ລົງວັນທີ 03 ມັງກອນ 2019;

## 2. ມາດຕະການຄຸ້ມຄອງລາຍຈ່າຍ

1) ໃຫ້ບັນດາຫົວໜ່ວຍງົບປະມານສູນກາງ ແລະ ທ້ອງຖິ່ນ ຈັດສັນແຜນລະອຽດ ເປັນແຜນລາຍຈ່າຍປະຈຳປີ, ງວດ ຕາມເພດານແຜນລາຍຈ່າຍທີ່ໄດ້ຮັບ ເພື່ອສົ່ງໃຫ້ ກົມງົບປະມານແຫ່ງລັດ ສຳລັບຂັ້ນທ້ອງຖິ່ນ ສົ່ງໃຫ້ຂະແໜງງົບປະມານປະຈຳແຂວງ;

2) ການປະຕິບັດແຜນລາຍຈ່າຍງົບປະມານຕ້ອງໃຫ້ສອດຄ່ອງຕາມສາລະບານງົບປະມານ-ບັນຊີດຽວ ບົນພື້ນຖານຕົວເລກແຜນງົບປະມານປະຈຳປີ, ປະຈຳງວດ ທີ່ກະຊວງການເງິນແຈ້ງໃຫ້ ເຂົ້າໃນລະບົບຂໍ້ມູນຂ່າວສານການເງິນ (GFIS ຫຼື GFIS+). ສຳລັບບັນດາເມືອງທີ່ບໍ່ມີລະບົບ ພາຍຫຼັງການຈັດຕັ້ງປະຕິບັດລາຍຈ່າຍ (ໃບອະນຸມັດ ແລະ ໃບຖອນເງິນ) ໃຫ້ສັງລວມຂໍ້ມູນລະອຽດ ສົ່ງຂະແໜງງົບປະມານ ແລະ ຂະແໜງຄັງເງິນປະຈຳທ້ອງຖິ່ນ ເພື່ອບັນທຶກເຂົ້າໃນລະບົບ ເປັນແຕ່ລະເດືອນ. ຄຸ້ມຄອງປະຕິບັດລາຍຈາຍບໍ່ເກີນເພດານແຜນທີ່ສະພາແຫ່ງຊາດຮັບຮອງ ພ້ອມທັງຫຼຸດຜ່ອນລາຍຈ່າຍທີ່ບໍ່ຈຳເປັນ ຕາມນະໂຍບາຍປະຢັດ ແລະ ຕ້ານການຟຸມເຟືອຍຂອງລັດຖະບານ;

3) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງກົນໄກການຄຸ້ມຄອງລາຍຈ່າຍໃຫ້ກະທັດຮັດ ແລະ ວ່ອງໄວ ໂດຍສະເພາະ/ການຫຼຸດຜ່ອນຂັ້ນຂອດອະນຸມັດ ແລະ ເບີກຈ່າຍງົບປະມານ ດ້ວຍການນຳໃຊ້ລະບົບທັນສະໄໝ, ມອບຄວາມຮັບຜິດຊອບໃຫ້ຜູ້ສັ່ງການຫຼາຍຂຶ້ນ, ສ່ວນກະຊວງການເງິນ ຫັນໄປລົງເລິກສ້າງແຜນລະອຽດແຕ່ຫົວທີ ແລະ ດຳເນີນກວດກາຫຼັງການຈ່າຍ ໂດຍໃຫ້ເລີ່ມຈັດຕັ້ງປະຕິບັດການອະນຸມັດ ທຸກພາກລາຍຈ່າຍ (ຍົກເວັ້ນລາຍຈ່າຍເງິນລົງທຶນຂອງລັດ) ໂດຍການເຮັດທົດລອງ 9 ພາກສ່ວນ (ກະຊວງການເງິນ, ສະພາແຫ່ງຊາດ, ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງ ແຮງງານສະຫວັດດີການ ແລະ ສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງ ສາທາລະນະສຸກ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ);

4) ໃຫ້ເອົາໃຈໃສ່ ແລະ ຍົກສູງຄວາມຮັບຜິດຊອບໃນການຈັດສັນແຜນ, ການປະກອບເອກະສານສະເໜີຂໍອະນຸມັດລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ເປັນບູລິມະສິດ ໃຫ້ຄິດໄລ່ດັດສະນີເງິນເດືອນພື້ນຖານ ຂອງພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານ ມູນຄ່າ 7.350 ກີບ/ດັດສະນີ ແລະ ເພີ່ມເງິນອຸດໜູນຄ່າຄອງຊີບ 150.000 ກີບ/ຄົນ/ເດືອນ (ເງິນອຸດໜູນຄ່າຄອງຊີບ ບໍ່ໃຫ້ຄິດໄລ່ພັນທະອາກອນ ແລະ ບໍ່ຫັກ 8% ເຂົ້າຄັງປະກັນສັງຄົມ);

ສຳລັບກົນໄກການຈັດຕັ້ງປະຕິບັດ ການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ ໃຫ້ອະນຸມັດໝົດປີຢູ່ໃນງວດທີ 1 ຕາມແຈ້ງການຂອງກະຊວງການເງິນ ສະບັບເລກທີ 3599/ກງ, ລົງວັນທີ 17 ພະຈິກ 2022 ໂດຍໃຫ້:

- ໃຫ້ຄັງເງິນແຫ່ງຊາດ ສົມທົບກັບບັນດາທະນາຄານ ແລະ ສະຖາບັນການເງິນ ເພື່ອຂະຫຍາຍການເບີກຈ່າຍເງິນເດືອນ ໃຫ້ເປັນປົກກະຕິ ໂດຍສະເພາະພະນັກງານລັດຖະກອນ ແລະ ພະນັກງານບຳນານ ຢູ່ບັນດາເມືອງທີ່ຢູ່ເຂດ

ຫ່າງໄກສອກຫຼີກ ບໍ່ມີການບໍລິການຂອງທະນາຄານ ໃຫ້ອຳນວຍຄວາມສະດວກໃນການເປີດບັນຊີເງິນຝາກໃຫ້ເປົ້າໝາຍດັ່ງກ່າວ ໃຫ້ສາມາດໂອນເງິນເຂົ້າບັນຊີປົກກະຕິໃນແຕ່ລະເດືອນ ຫຼື ຊໍາລະຜ່ານລະບົບ U-money ໃຫ້ສໍາເລັດ;

- ໃຫ້ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ສົມທົບກັບ ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ, ກະຊວງພາຍໃນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ດັ່ງນີ້:
  - \+ ພັດທະນາການເບີກຈ່າຍເງິນເດືອນ, ເງິນອຸດໜູນ, ເງິນນະໂຍບາຍຂອງ ຫົວໜ່ວຍງົບປະມານຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຜ່ານລະບົບທະນາຄານ, ສະຖາບັນການເງິນ ແລະ ກະເປົາເງິນເອເລັກໂຕຼນິກ ແບບລວມສູນ ຜ່ານລະບົບ FINLINK ເພື່ອຄົ້ນຄວ້າການຫຼຸດຜ່ອນຈຳນວນລາຍເຊັນຢັ້ງຢືນ, ຂັ້ນຕອນການຜ່ານບັນຊີເງິນເດືອນທັງສູນກາງ ແລະ ທ້ອງຖິ່ນ ໃຫ້ກະທັດຣັດວ່ອງໄວ ແລະ ສາມາດເບີກຈ່າຍເງິນເດືອນໄດ້ທັນຕາມກຳນົດເວລາ;
  - \+ ເລັ່ງປັບປຸງໃນການພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນ (GFIS+) ໃຫ້ສຳເລັດ ເພື່ອຮັບປະກັນການຈັດສັນ, ການອະນຸມັດງົບປະມານ ແລະ ການສ້າງໃບຂໍຖອນ ຜ່ານລະບົບດັ່ງກ່າວໃຫ້ມີຄວາມສະດວກ ເພື່ອສ້າງພື້ນຖານໃນການຂ້າມຜ່ານໄປສູ່ການນຳໃຊ້ລະບົບ (FMIS) ຕາມມາດຕະຖານສາກົນໃນຕໍ່ໜ້າ;
  - \+ ພັດທະນາການເຊື່ອມໂຍງລະບົບຄຸ້ມຄອງການເງິນຂອງກະຊວງການເງິນ (GFIS+) ກັບລະບົບຄຸ້ມຄອງຖານຂໍ້ມູນພະນັກງານລັດຖະກອນ ຂອງກະຊວງພາຍໃນ (PIMS) ເພື່ອເປັນພື້ນຖານໃນການເບີກຈ່າຍເງິນເດືອນ.

5) ການສະເໜີຂໍອະນຸມັດລາຍຈ່າຍງົບປະມານ ຂອງຂະແໜງການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃຫ້ຈັດລຽງບູລິມະສິດ ຕາມແຜນງວດ ທີ່ກະຊວງການເງິນແຈ້ງໃຫ້ ບໍ່ອະນຸຍາດໃຫ້ສະເໜີອະນຸມັດເກີນແຜນງວດ (ຍົກເວັ້ນເງິນເດືອນ, ເງິນນະໂຍບາຍ ແລະ ການຊໍາລະໜີ້ສິນ). ໃຫ້ບັນດາຫົວໜ່ວຍງົບປະມານເອົາໃຈໃສ່ການສະເໜີອະນຸມັດລາຍຈ່າຍເງິນລົງທຶນຂອງລັດ ໃຫ້ສາມາດດຳເນີນການເບີກຈ່າຍເລີ່ມແຕ່ ງວດ 1 ເປັນຕົ້ນໄປ ໂດຍຖືເອົາລາຍຈ່າຍການຊໍາລະໜີ້ສິນ, ໂຄງການສືບຕໍ່ ເປັນບູລິມະສິດ; ສຳລັບການຈັດຊື້-ຈັດຈ້າງ ໃຫ້ຫຼີກລ້ຽງປະຕິບັດໃນງວດ 4 ເພື່ອເປັນການແກ້ໄຂບັນຫາເອກະສານຂໍເບີກຈ່າຍໃນໄລຍະທ້າຍປີເປັນຈຳນວນຫຼວງຫຼາຍ;

6) ອະນຸຍາດໃຫ້ ຜູ້ສັ່ງການ ດັດສະແລ່ຍຮ່ວງລາຍຈ່າຍພາຍໃນພາກ ບໍ່ໃຫ້ເກີນຈຳນວນຄັ້ງຕາມແຈ້ງແຜນງົບປະມານຂອງກະຊວງການເງິນ, ກໍລະນີມີການດັດແກ້ຂ້າມພາກຕ້ອງປະຕິບັດຕາມມາດຕາ 63 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ. ສຳລັບຂັ້ນທ້ອງຖິ່ນ ອະນຸຍາດໃຫ້ຜູ້ສັ່ງການ ສາມາດດັດສະແລ່ຍແຜນລາຍຈ່າຍລະຫວ່າງຂະແໜງການ (ພາກລາຍຈ່າຍດຽວກັນ) ໄດ້ສະເພາະແຜນລາຍຈ່າຍພາກເງິນເດືອນ ແລະ ພາກເງິນນະໂຍບາຍ ເທົ່ານັ້ນ ຕາມເພດານແຜນລາຍຈ່າຍທີ່ທ້ອງຖິ່ນໄດ້ຮັບ, ການສະເໜີຂໍດັດສະແລ່ຍ ເພີ່ມ/ຫຼຸດ ແຜນງົບປະມານຂອງຫົວໜ່ວຍງົບປະມານ ຊ້າສຸດບໍ່ກາຍວັນທີ 31 ສິງຫາ 2023;

7) ການປະຕິບັດເງິນສົມທົບຂອງລັດຖະບານ 8,5% ເຂົ້າກອງທຶນປະກັນສັງຄົມ ໃຫ້ປະຕິບັດຕາມສະຖິຕິການສົມທົບທຶນ 8% ຂອງພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ; ພ້ອມນັ້ນ, ໃຫ້ທ້ອງຖິ່ນ (ພະແນການເງິນແຂວງ/ນະຄອນຫຼວງ, ຄັງເງິນປະຈຳທ້ອງຖິ່ນ) ເອົາໃຈໃສ່ໃນການໂອນເງິນສົມທົບທຶນ 8% ເຂົ້າບັນຊີກອງທຶນປະກັນສັງຄົມ. ສ່ວນກຳລັງປ້ອງກັນຊາດ ຂັ້ນທ້ອງຖິ່ນ ໃຫ້ໂອນເຂົ້າບັນຊີຂອງ ກົມປະກັນສັງຄົມ ກະຊວງປ້ອງກັນປະເທດ ໄປພ້ອມກັບການເບີກຈ່າຍເງິນເດືອນປົກກະຕິ;

8) ການປະຕິບັດເງິນນະໂຍບາຍຕໍ່ຜູ້ມີຜົນງານການປະຕິວັດ ຕ້ອງມີບັນຊີຈຳນວນພົນລະອຽດ, ສະຖິຕິການເບີກຈ່າຍຜ່ານມາ ເປັນແຕ່ລະປີ (ແຜນລາຍຈ່າຍທັງໝົດ, ປະຕິບັດຮອດປະຈຸບັນ ແລະ ຈຳນວນຍັງເຫຼືອ), ເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍໃນປີ ຄັດຕິດ ເພື່ອເປັນຂໍ້ມູນພື້ນຖານໃນການອະນຸມັດ ແລະ ຕິດຕາມ;

9) ໃຫ້ບັນດາຫົວໜ່ວຍງົບປະມານ ເປັນເຈົ້າການສົບທົບກັບຄັງເງິນແຫ່ງຊາດ ກວດກາ ແລະ ແກ້ໄຂ ລາຍຈ່າຍລ່ວງໜ້າຂອງຕົນໃນລະບົບຄັງເງິນທີ່ມີຕົວເລກສະສົມຜ່ານມາ ໂດຍຄົ້ນຄວ້າຈັດສັນເຂົ້າໃນແຜນງົບປະມານຂອງຕົນທີ່ໄດ້ຮັບໃນແຕ່ລະປີ ໂດຍບໍ່ໃຫ້ລ່ວງໜ້ານອກແຜນ;

10) ໃຫ້ທ້ອງຖິ່ນ (ພະແນກການເງິນແຂວງ/ນະຄອນຫຼວງ) ຕ້ອງໄດ້ຈັດສັນ ແລະ ແຍກແຜນລາຍຈ່າຍເງິນບໍລິຫານ ຂອງບັນດາດ່ານສາກົນ ເປັນແຜນລາຍຈ່າຍສະເພາະ ເພື່ອຮັບປະກັນສາມາດຕອບສະໜອງງົບປະມານບໍລິຫານຂອງດ່ານໄດ້ເປັນປົກກະຕິ ໂດຍສະເພາະ ຄ່າຊົມໃຊ້ກະແສໄຟຟ້າ, ນໍ້າປະປາ ແລະ ການບໍາລຸງຮັກສາດ່ານ ແລະ ກ້າວໄປເປັນຫົວໜ່ວຍງົບປະມານໜຶ່ງທີ່ຂຶ້ນກັບບັນດາແຂວງໃນຕໍ່ໜ້າ;

11) ລາຍຈ່າຍດັດສົມ, ສິ່ງເສີມ ແລະ ເງິນບໍາລຸງ ໃຫ້ບັນດາຫົວໜ່ວຍງົບປະມານສ້າງແຜນລະອຽດຕາມສາລະບານງົບປະມານ ເພື່ອໃຫ້ຂະແໜງງົບປະມານອະນຸມັດເປັນງວດຕາມແຜນງວດ, ສໍາລັບບ້ວງລາຍຈ່າຍການເງິນອື່ນຂອງລັດ ອະນຸມັດເປັນຖ້ຽວ, ສ່ວນການເບີກຖອນ ຕ້ອງມີແຜນວຽກ, ແຜນງານລະອຽດ ສົ່ງໃຫ້ຂະແໜງຄັງເງິນ ເພື່ອກວດກ່ອນຈ່າຍຕາມລະບຽບ. ສໍາລັບລາຍຈ່າຍວຽກງານອາຊຽນ ເປັນຕົ້ນ: ການຈັດປະຊຸມແບບເຊິ່ງໜ້າ ຫຼື ການຈັດກອງປະຊຸມທາງໄກ ຢູ່ພາຍໃນປະເທດທີ່ ສປປ ລາວ ບໍ່ເປັນເຈົ້າພາບ ບໍ່ອະນຸຍາດໃຫ້ຄິດໄລ່ອັດຕາຮັບໃຊ້ກອງປະຊຸມ ໃຫ້ຖືວ່າເປັນວຽກງານເຄື່ອນໄຫວປົກກະຕິພາຍໃນຂອງຕົນ (ຍົກເວັ້ນກໍລະນີກອງປະຊຸມລະດັບຊາດ ຫຼື ສປປ ລາວ ເປັນເຈົ້າພາບ);

12) ຈັດຕັ້ງປະຕິບັດ ແລະ ປະເມີນ 5 ຫົວໜ່ວຍ ເຮັດທົດລອງການຫັນກຸ້ມຕົນເອງທາງດ້ານງົບປະມານ ຕາມຄໍາແນະນໍາ ກະຊວງການເງິນ ສະບັບເລກທີ 2258/ກງ, ສືບຕໍ່ຜັນຂະຫຍາຍບັນດາຫົວໜ່ວຍງົບປະມານ ທີ່ມີເງື່ອນໄຂ ໄປຄຽງຄູ່ກັບການຄົ້ນຄວ້າປັບປຸງຍົກລະດັບນິຕິກໍາຂຶ້ນເປັນ ດໍາລັດຂອງລັດຖະບານ;

13) ລາຍຈ່າຍວິຊາການ ແລະ ກອງທຶນຂອງລັດ ຈັດຕັ້ງປະຕິບັດຕາມ ມາດຕາ 08 ແລະ ມາດຕາ 10 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 13/ສພຊ ແລະ ລະບຽບການທີ່ກ່ຽວຂ້ອງ;

14) ເປັນເຈົ້າການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍກໍານົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ ໂດຍໃຫ້ເອົາໃຈໃສ່ບາງລາຍຈ່າຍ ໂດຍສະເພາະ ໃຫ້ເລືອກເຟັ້ນ ແລະ ປະຕິບັດສະເພາະບາງຮ່ວງລາຍຈ່າຍທີ່ຈໍາເປັນເທົ່ານັ້ນ ເພື່ອຫຼຸດຜ່ອນ ຫຼື ຢຸດຕິບາງລາຍຈ່າຍ ທີ່ເຫັນວ່າມີລັກສະນະຟຸມເຟືອຍ, ຊໍ້າຊ້ອນ ແລະ ບໍ່ມີປະສິດທິຜົນ (ລະອຽດມີຂໍ້ຕົກລົງສະເພາະ);

15) ໃຫ້ຖືເອົາການຊໍາລະຕົ້ນທຶນເງິນກູ້ຢືມ ແລະ ດອກເບ້ຍ ໃຫ້ເປັນບູລິມະສິດ ໃຫ້ອະນຸມັດຕາມຕົວຈິງ ບົນພື້ນຖານແຜນງົບປະມານປະຈໍາປີ. ພ້ອມທັງ ສືບຕໍ່ລະດົມແຫຼ່ງທຶນ ເພື່ອດຸນດ່ຽງງົບປະມານ ແລະ ຊໍາລະໜີ້ສິນສາທາລະນະ ດ້ວຍຫຼາຍຮູບການ ໂດຍການຈໍາໜ່າຍພັນທະບັດລັດຖະບານ, ກູ້ຢືມ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນການຊໍາລະໜີ້ສິນສາທາລະນະທັນ ກໍານົດຕາມຂໍ້ຜູກພັນສັນຍາ;

16) ແຜນລາຍຈ່າຍວິຊາການ ແລະ ກອງທຶນ ສາມາດດັດສະເລ່ຍໃນພາກດຽວກັນ ລະຫວ່າງຂະແໜງປົກຄອງ, ຂະແໜງສຶກສາ ແລະ ຂະແໜງສາທາລະນະສຸກ ຂອງທ້ອງຖິ່ນ ພາຍໃຕ້ກອບແຜນລາຍຈ່າຍປະຈໍາປີ ທີ່ໄດ້ຮັບ ແຕ່ບໍ່ອະນຸຍາດໃຫ້ດັດສະເລ່ຍຂ້າມພາກ, ຫາກຈໍາເປັນຕ້ອງດັດສະເລ່ຍ ໃຫ້ສະເໜີຜູ້ສັ່ງການເອກົກລົງ;

17) ໃຫ້ຄັງເງິນແຫ່ງຊາດ ແລະ ຄັງເງິນປະຈໍາທ້ອງຖິ່ນ ຄົ້ນຄວ້າກົນໄກການບໍລິຫານແຫຼ່ງລາຍຮັບຈາກ ຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນ ຂອງບັນດາຫົວໜ່ວຍງົບປະມານ ເປັນບັນຊີສະເພາະ ເພື່ອອໍານວຍຄວາມສະດວກໃຫ້ການນໍາໃຊ້ ໃຫ້ມີສະພາບຄ່ອງ;

18) ການເກັບກູ້ເງິນຄືນ ຫຼື ການທົດແທນຈາກໜີ້ສິນຄຸມເຄືອທີ່ຕິດພັນຈາກການຈ່າຍລ່ວງໜ້າສະສົມຫຼາຍປີ, ທີ່ຄັງເງິນປະຈໍາທ້ອງຖິ່ນ ເກັບກູ້ໄດ້ຈາກການທົດແທນ ດ້ວຍການປະຕິບັດແຜນລາຍຈ່າຍງົບປະມານ ຕ້ອງໂອນຈໍານວນເງິນດັ່ງກ່າວ ເຂົ້າບັນຊີເງິນຝາກງົບປະມານປີເກົ່າຂອງສູນກາງ ຫຼື ເຂົ້າບັນຊີ ຄັງເງິນສະສົມຂອງລັດຖະບານ ບໍ່ອະນຸຍາດໃຫ້ທ້ອງຖິ່ນນໍາໃຊ້ຢ່າງເດັດຂາດ;

19) ສືບຕໍ່ລະດົມແຫຼ່ງທຶນ ເພື່ອຮັບປະກັນການຊໍາລະໜີ້ສິນສາທາລະນະ ທັນກໍານົດຕາມຂໍ້ຜູກພັນສັນຍາ ແລະ ເດັດຂາດບໍ່ໃຫ້ປະເທດຕົກຢູ່ໃນສະພາບທີ່ບໍ່ສາມາດຊໍາລະໜີ້ສິນໄດ້ ດ້ວຍຫຼາຍຮູບການ ເປັນຕົ້ນ ການຈໍາໜ່າຍພັນທະບັດລັດຖະບານ, ກູ້ຢືມ ຢູ່ພາຍໃນ ແລະ ຕ່າງປະເທດ;

20) ສຸມໃສ່ການລົງກວດກາຫຼັງຈ່າຍ ໂດຍສະເພາະພາຍຫຼັງປະຕິບັດ 6 ເດືອນຕົ້ນປີຢ່າງມີຈຸດສຸມ ເພື່ອເປັນພື້ນຖານໃນການຄົ້ນຄວ້າອະນຸມັດໃນທ້າຍປີ ສອດຄ່ອງກັບການປະຕິບັດວຽກຕົວຈິງ ຮັບປະກັນການນໍາໃຊ້ງົບປະມານຂອງລັດ ໃຫ້ມີປະ

ສິດທິຜົນ, ພ້ອມທັງຊຸກຍູ້ ແນະນຳ ທ້ອງຖິ່ນ ເປັນເຈົ້າການໃນການກວດກາ ບັນດາຫົວໜ່ວຍງົບປະມານທີ່ຂຶ້ນກັບຕົນ. ສຳລັບການເກັບກູ້ເງິນຄືນ ເປັນຕົ້ນ ເງິນເດືອນຈາກການປະລະໜ້າທີ່, ເງິນບໍລິຫານທີ່ຖອນອອກແຕ່ບໍ່ໄດ້ນຳໃຊ້ ຫຼື ນຳໃຊ້ບໍ່ໝົດ ແລະ ເງິນເກັບກູ້ຄືນຈາກລາຍຈ່າຍລ່ວງໜ້າຄັງເງິນຜ່ານມາ ໃຫ້ປະຕິບັດຕາມແຈ້ງການ ສະບັບເລກທີ 0846/ກງ, ລົງວັນທີ 23 ມີນາ 2020 (ບໍ່ອະນຸຍາດໃຫ້ຈົດເປັນລາຍຮັບຂອງບັນດາກະຊວງ, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ);

21) ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຊຸກຍູ້ ແລະ ດຳເນີນການແກ້ໄຂ ຜົນການກວດສອບແຫ່ງລັດ ຕາມມະຕິຂອງສະພາແຫ່ງຊາດ.

## 3. ດ້ານການດຸ່ນດ່ຽງງົບປະມານ

- **ຂະແໜງການເງິນຂັ້ນສູນກາງ** (ກົມຄຸ້ມຄອງໜີ້ສິນສາທາລະນະ, ກົມການເງິນຕ່າງປະເທດ, ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ ແລະ ກົມກ່ຽວຂ້ອງ) ປະຕິບັດດັ່ງນີ້:
  + ດຳເນີນຂັ້ນຕອນການລະດົມແຫຼ່ງທຶນ ເພື່ອມາດຸ່ນດ່ຽງແຜນງົບປະມານ ປະຈຳປີແຕ່ຫົວທີ ດ້ວຍການຄົ້ນຄ້ວາລະດົມທຶນຈາກຫຼາຍແຫຼ່ງທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ພຽງພໍຕາມແຜນ;
  + ແຍກການຄຸ້ມຄອງ ແລະ ບໍລິຫານໜີ້ສິນພາຍໃນ ແລະ ຕ່າງປະເທດ ສະເພາະ ເພື່ອໃຫ້ສາມາດບໍລິຫານຈັດສັນແຜນ ແລະ ການທົດແທນຄືນ ໃຫ້ມີຄວາມຢືດຢຸ່ນ ແລະ ພຽງພໍ;
  + ສະໜອງແຫຼ່ງເງິນ ເພື່ອດຸ່ນດ່ຽງ ໃຫ້ບັນດາແຂວງ ທີ່ຂາດດຸນ ໃຫ້ວ່ອງໄວ ເພື່ອໃຫ້ສາມາດປະຕິບັດລາຍຈ່າຍ ທີ່ເປັນບູລິມະສິດ ເປັນຕົ້ນ: ເງິນເດືອນ ແລະ ເງິນນະໂຍບາຍ ໃຫ້ເປັນປົກກະຕິ;
  + ໃຫ້ຄັງເງິນແຫ່ງຊາດ ຄົ້ນຄວ້າກົນໄກການການຊ່ວຍໜູນງົບປະມານໃຫ້ສູນກາງ ສຳລັບ 8 ແຂວງ ທີ່ມີແຜນລາຍຮັບເກີນດຸນ ເພື່ອຮັບປະກັນໃຫ້ງົບປະມານສູນກາງມີຄວາມຄ່ອງຕົວ. ໂດຍໃຫ້ມີການໄກການແບ່ງປັນລາຍຮັບທີ່ຈະໂອນຄືນໃຫ້ສູນກາງເປັນປົກກະຕິໃນແຕ່ລະເດືອນ ເພື່ອຫຼີກລ້ຽງບໍ່ໃຫ້ທ້ອງຖິ່ນນຳໃຊ້ເງິນເກີນດຸນໄປນຳໃຊ້ເຂົ້າໃນເປົ້າໝາຍອື່ນ.

- **ຂະແໜງການເງິນຂັ້ນທ້ອງຖິ່ນ**
  + ແຂວງທີ່ຂາດດຸນ: ໃຫ້ນຳໃຊ້ລາຍຮັບຂອງແຂວງເປັນຫຼັກກ່ອນ ເພື່ອປະຕິບັດລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍເປັນຕົ້ນຕໍ ແລະ ທັນເວລາ, ສ່ວນທີ່ບໍ່ພຽງພໍ ຈຶ່ງນຳໃຊ້ແຫຼ່ງດຸນດ່ຽງ ຈາກສູນກາງ;
  + ແຂວງ ແລະ ນະຄອນຫຼວງ ທີ່ເກີນດຸນ: ໃຫ້ປະຕິບັດລາຍຈ່າຍເງິນເດືອນ, ເງິນນະໂຍບາຍ ເປັນ ຕົ້ນຕໍ, ພ້ອມທັງ ດຸ່ນດ່ຽງງົບປະມານເກີນດຸນ ໃຫ້ສູນກາງທັນຕາມກຳນົດເວລາ;
  + ໃຫ້ບັນດາແຂວງ ແລະ ນະຄອນຫຼວງ ເອົາໃຈໃສ່ຄຸ້ມຄອງ ການດຸ່ນດ່ຽງງົບປະມານ ຂອງບັນດາເມືອງ ຕາມແຜນທີ່ສະພາປະຊາຊົນຂັ້ນແຂວງຮັບຮອງ.

4. **ວຽກທັນສະໄໝ** ຮີບຮ້ອນປັບປຸງໃນການພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານ ການເງິນຂອງລັດຖະບານ (GFIS PLUS) ໃຫ້ສຳເລັດ ເພື່ອຮັບປະກັນການສ້າງແຜນງົບປະມານແຫ່ງລັດ, ການອະນຸມັດ ແລະ ການສ້າງໃບຂໍຖອນຜ່ານລະບົບດັ່ງກ່າວໃຫ້ມີຄວາມສະດວກ ເພື່ອສ້າງພື້ນຖານໃນການຂ້າມຜ່ານໄປສູ່ການນຳໃຊ້ລະບົບ (FMIS) ຕາມມາດຕະຖານສາກົນໃນຕໍ່ໜ້າ.

5. **ວຽກການຕ່າງປະເທດ** ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສັງລວມຂໍ້ມູນການຊ່ວຍເຫຼືອລ້າຈາກສະຖາບັນການເງິນສາກົນ, ອົງການຈັດຕັ້ງສາກົນ ແລະ ປະເທດຕ່າງໆ ເພື່ອເອົາເຂົ້າໃນບົດສະຫຼຸບລາຍງານງົບປະມານແຫ່ງລັດຕາມລະບຽບການ.

6. **ວຽກໜີ້ສິນສາທາລະນະ**

- ລົງເລິກຄຸ້ມຄອງ ແລະ ຄົ້ນຄ້ວາມາດຕະການບໍລິຫານ ແລະ ຊຳລະໜີ້ສິນສາທາລະນະ ໃຫ້ສຳເລັດຕາມຄາດໝາຍ ໂດຍພື້ນຖານ, ພ້ອມທັງສືບຕໍ່ຄົ້ນຄວ້າວິໄຈ ແລະ ປະເມີນຜົນກະທົບຕໍ່ຖານະໜີ້ສິນລວມຂອງປະເທດ ເພື່ອຊອກມາດຕະການແກ້ໄຂໃຫ້ທັນການ ແລະ ສອດຄ່ອງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະກຳນົດໄວ້;

- ຄຸ້ມຄອງການຊໍາລະໜີ້ສິນໃຫ້ຖືກຕ້ອງ ແລະ ທັນກໍານົດເວລາ;
- ຊຸກຍູ້ບັນດາບໍລິສັດ, ລັດວິສາຫະກິດ, ນິຕິບຸກຄົນ ແລະ ບຸກຄົນ ທີ່ມີສັນຍາເງິນກູ້ກັບກະຊວງການເງິນ ໃຫ້ປະຕິບັດພັນທະການຊໍາລະໜີ້ສິນຄືນໃຫ້ໄດ້ຕາມສັນຍາ;
- ຄົ້ນຄວ້າລະດົມທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອຊໍາລະໜີ້ສິນໃຫ້ໄດ້ຕາມແຜນ;
- ຮັບປະກັນການເບີກຖອນເງິນຊ່ວຍເຫຼືອເພື່ອການພັດທະນາ (ODA) ໃຫ້ໄດ້ຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການຕາມກໍານົດເວລາ;
- ເປັນເຈົ້າການປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສັງລວມເງິນຊ່ວຍເຫຼືອລ້າເປັນໂຄງການ ທີ່ຂະແໜງແຜນການ ແລະ ການລົງທຶນ ຄຸ້ມຄອງ ທີ່ໄດ້ຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ ໃຫ້ບັນດາແຂວງ ແລະ ນະຄອນຫຼວງ ເຮັດໜ້າທີ່ຕິດຕາມການປະຕິບັດໂຄງການ ແລະ ບັນທຶກຕົວເລກຈິດຮັບ-ຈິດຈ່າຍລວມສູນຢູ່ສູນກາງ ຕາມຂໍ້ມູນທີ່ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ໄດ້ແຈ້ງໃຫ້ຮັບຊາບເປັນແຕ່ລະໄລຍະ.

**7. ການແກ້ໄຂຜົນການກວດສອບ**

- ໃຫ້ຫ້ອງການກະຊວງການເງິນສົມທົບກັບກົມກວດກາ ເປັນເຈົ້າການສືບຕໍ່ຈັດຕັ້ງປະຕິບັດຕາມບົດບັນທຶກລະຫວ່າງອົງການກວດສອບແຫ່ງລັດ ແລະ ກະຊວງການເງິນ ໃນແຕ່ລະໄລຍະ ເພື່ອເປັນໃຈກາງສັງລວມຂໍ້ມູນບັນຫາຄົງຄ້າງຕາມຜົນການກວດສອບຂອງຂະແໜງການເງິນ ໃຫ້ຄົບຖ້ວນ ແລະ ຈະແຈ້ງ ແລ້ວສົ່ງໃຫ້ກົມກວດກາການເງິນຕິດຕາມ, ກວດກາ ແລະ ປະເມີນຜົນຂອງການແກ້ໄຂຜົນຂອງການກວດສອບເປັນແຕ່ລະໄລຍະ;
- ບັນດາຫົວໜ່ວຍງົບປະມານ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການສ້າງກົນໄກປະສານສົມທົບກັບອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຂະແໜງການເງິນ ເພື່ອສັງລວມຂໍ້ມູນ, ບັນຫາຄົງຄ້າງ ຕາມຜົນການກວດສອບ ໃຫ້ຄົບຖ້ວນຈະແຈ້ງ ເພື່ອສາມາດຕິດຕາມ, ກວດກາ ແລະ ປະເມີນຜົນຂອງການແກ້ໄຂຜົນຂອງການກວດສອບໃນແຕ່ລະໄລຍະ;
- ບັນດາຫົວໜ່ວຍງົບປະມານ ຂັ້ນສູນກາງ ແລະ ທ້ອງຖິ່ນ ຄົ້ນຄ້ວາແຕ່ງຕັ້ງຄະນະຮັບຜິດຊອບແກ້ໄຂຜົນການກວດສອບຂອງຕົນ ແລະ ມອບໝາຍຄວາມຮັບຜິດຊອບຢ່າງຈະແຈ້ງ ເພື່ອວາງມາດຕະການໃນການແກ້ໄຂຕາມກົດໝາຍ, ຕາມການແນະນໍາ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເກັບກູ້ຄືນລາຍຮັບເພື່ອມອບເຂົ້າງົບປະມານ. ສໍາລັບລາຍຈ່າຍທີ່ອົງການກວດສອບກວດເຫັນຈ່າຍນອກແຜນ ບັນດາຫົວໜ່ວຍງົບປະມານຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງຄົ້ນຄວ້ານໍາໃຊ້ແຜນງົບປະມານຂອງຕົນທີ່ໄດ້ຮັບໃນແຕ່ລະປີ ເພື່ອແກ້ໄຂຕາມບົດບັນທຶກຮ່ວມກັບຄະນະກວດສອບ;
- ສໍາລັບຜົນການກວດສອບ ທີ່ສາມາດແກ້ໄຂໄດ້ ແມ່ນສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ພິຈາລະນາ. ສ່ວນຜົນການກວດສອບ ທີ່ບໍ່ສາມາດແກ້ໄຂໄດ້ ໃຫ້ສັງລວມລາຍງານລັດຖະບານ ໂດຍຜ່ານອົງການກວດກາລັດ ແລະ ຂະແໜງການເງິນ ເພື່ອນໍາສະເໜີສະພາແຫ່ງຊາດ ພິຈາລະນາ.

## V. ນະໂຍບາຍສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນ

1. ແຂວງເກີນດຸນໃໝ່

- ກະຊວງການເງິນ ຈະສ້າງບົດບັນທຶກມອບ-ຮັບ ບັນຊີຫົວໜ່ວຍທຸລະກິດລະອຽດ ໃຫ້ທ້ອງຖິ່ນ ລະຫວ່າງ ຄະນະນໍາຂອງກະຊວງການເງິນ ແລະ ຄະນະນໍາຂອງ 5 ແຂວງ ທີ່ເປັນແຂວງເກີນດຸນໃໝ່ ເພື່ອເປັນພື້ນຖານໃຫ້ແຂວງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໄດ້ຕາມແຜນ ຫຼື ລື່ນແຜນທີ່ສູນກາງຈັດຕັ້ງປະຕິບັດຜ່ານມາ;
- ໃຫ້ອໍານາດການປົກຄອງທ້ອງຖິ່ນ ເປັນເຈົ້າການ ນໍາພາ-ຊີ້ນໍາ ໃນການຈັດຕັ້ງປະຕິບັດ ໂດຍໃຫ້ມີການຕິດຕາມ, ກວດກາ ແລະ ລາຍງານກະຊວງການເງິນຢ່າງເປັນປົກກະຕິ ໃນແຕ່ລະງວດ;
- ແຂວງເກີນດຸນຕ້ອງຮັບປະກັນການດຸ່ນດ່ຽງໃຫ້ສູນກາງ ເປັນແຕ່ລະເດືອນຕາມແຜນງົບປະມານປະຈໍາປີ ທີ່ສະພາແຫ່ງຊາດຮັບຮອງ. ພ້ອມທັງ ບໍ່ອະນຸຍາດໃຫ້ທ້ອງຖິ່ນເອົາລາຍຮັບທີ່ເກີນດຸນ ໄປນໍາໃຊ້.

2. ແຂວງຂາດດຸນ

- ການແບ່ງລາຍຮັບລະຫວ່າງສູນກາງ ແລະ ທ້ອງຖິ່ນ ຕາມ 4488/ກງ ໃຫ້ຈັດສັນລະອຽດແຕ່ຕົ້ນປີ (ແຜນຂັ້ນຢູ່ໃສໃຫ້ປະຕິບັດຢູ່ບ່ອນນັ້ນ) ຫຼື ຖ້າຈະມີການອ່ວຍລາຍຮັບ ແມ່ນຈະພິຈາລະນາຄົ້ນຄວ້າເພີ່ມແຜນລາຍຮັບດັ່ງກ່າວໃນ 6

ເດືອນທ້າຍປີ; ກໍລະນີຫາກແຂວງຄາດຄະເນປະຕິບັດແຜນລາຍຮັບບໍ່ໄດ້ຕາມແຜນ ທີ່ສະພາແຫ່ງຊາດຮັບຮອງ ໃຫ້ສົມທົບກັບ ກະຊວງການເງິນ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ ລາຍຈ່າຍທີ່ເປັນບູລິມະສິດ ເປັນຕົ້ນ ເງິນເດືອນ ແລະ ເງິນນະໂຍບາຍ ໃຫ້ທັນຕາມກຳນົດເວລາ;

- ບໍ່ອະນຸຍາດໃຫ້ບັນດາແຂວງ ສະເໜີຂໍເພີ່ມລາຍຮັບພູດສູນກາງ ປະຕິບັດຢູ່ທ້ອງຖິ່ນ ທີ່ບໍ່ນອນໃນແຜນລາຍຮັບປະຈຳປີຂອງທ້ອງຖິ່ນ ເພື່ອເປັນເງິນເກີນແຜນຂອງທ້ອງຖິ່ນຕົນ.

3. ນະໂຍບາຍສົ່ງເສີມການເກັບ ແລະ ນຳໃຊ້ລາຍຮັບເກີນແຜນ

- ການຈັດຕັ້ງປະຕິບັດເງິນເກີນແຜນ ປີ 2022 ພາຍຫຼັງການໄລ່ລຽງຂາດຕົວ ກະຊວງການເງິນ ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຈັດສັນແບ່ງງົບປະມານຕາມສັດສ່ວນເປີເຊັນ ຈາກເງິນເກີນແຜນຕົວຈິງຂອງບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອນຳໃຊ້ເຂົ້າໃນຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຈຳນວນ 200 ຕື້ກີບ ແລະ ວຽກງານການອອກໃບຕາດິນ ຈຳນວນ 20 ຕື້ກີບ. ສ່ວນທີ່ເຫຼືອຈຶ່ງໃຫ້ບັນດາແຂວງ, ນະຄອນຫຼວງວຽງຈັນ ນຳໃຊ້ເຂົ້າໃນການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ທີ່ສຳເລັດ 100% ຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022;
- ສຳລັບການນຳໃຊ້ເງິນເກີນແຜນ ປີ 2023 ທີ່ບັນດາຂະແໜງການ ສູນກາງ ແລະ ທ້ອງຖິ່ນ ສາມາດປະຕິບັດລາຍຮັບລວມຂອງຕົນຄຸ້ມຄອງໄດ້ເກີນແຜນການ ຜ່ານການໄລ່ລຽງຂາດຕົວ ແລະ ໄດ້ຮັບການຢັ້ງຢືນຈາກອົງການກວດສອບ, ກະຊວງການເງິນ ນຳສະເໜີ ລັດຖະບານ ພິຈາລະນາ ອັດຕາສ່ວນການນຳໃຊ້ເງິນເກີນແຜນດັ່ງກ່າວ ຕາມມາດຕາ 2 ຂໍ້ທີ 16 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ກໍລະນີປະຕິບັດໄດ້ເກີນແຜນໃຫ້ທ້ອງຖິ່ນນຳໃຊ້ ຕາມອັດຕາສ່ວນທີ່ລັດຖະບານ ແລະ ຄະນະປະຈຳສະພາແຫ່ງຊາດຕົກລົງ.

## VI. ຂັ້ນຕອນ ແລະ ການປະກອບເອກະສານ ອະນຸມັດລາຍຈ່າຍງົບປະມານ

ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ສືບຕໍ່ປະຕິບັດຕາມຄຳແນະນຳ ກ່ຽວກັບການປະກອບເອກະສານອະນຸມັດລາຍຈ່າຍງົບປະມານແຫ່ງລັດ ແລະ ການເກັບສຳເນົາ ສະບັບເລກທີ 2718/ກງ, ລົງວັນທີ 28 ສິງຫາ 2018 ແລະ ຄຳແນະນຳ ກ່ຽວກັບການປະກອບເອກະສານ ແລະ ການກວດກາ ເອກະສານລາຍຈ່າຍງົບປະມານແຫ່ງລັດ ແລະ ທຶນຊ່ວຍເຫຼືອໂຄງການເພື່ອການພັດທະນາຢູ່ຄັງເງິນແຫ່ງຊາດ ສະບັບເລກທີ 0866/ກງ, ລົງວັນທີ 22 ມີນາ 2019.

ຄົ້ນຄວ້າຄືນການປະກອບໃບຂໍຖອນ ການເບີກຈ່າຍເງິນເດືອນ, ເງິນນະໂຍບາຍ ແລະ ລາຍຈ່າຍບໍລິຫານອື່ນໆ ໃຫ້ຫຼຸດຜ່ອນຂັ້ນຂອດລົງ ເພື່ອຮັບປະກັນໃຫ້ທັນເວລາ ແລະ ສາມາດຈັດຕັ້ງປະຕິບັດໄດ້ເປັນປົກກະຕິ ແລະ ຄ່ອງຕົວ ດ້ວຍການເລີ່ມເຮັດທົດລອງໃນ 6 ເດືອນທ້າຍປີ 2023 ຢູ່ບາງກະຊວງທີ່ມີເງື່ອນໄຂ.

## VII. ການສະຫຼຸບລາຍງານ ແລະ ການກະກຽມປິດບັນຊີງົບປະມານ

1. ການສະຫຼຸບລາຍງານການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ເປັນແຕ່ລະເດືອນ ແລະ ປີ ຂອງບັນດາຫົວໜ່ວຍງົບປະມານ ແລ້ວສົ່ງໃຫ້ກະຊວງການເງິນ ບໍ່ໃຫ້ກາຍວັນທີ 10 ຂອງເດືອນຖັດໄປ ໃຫ້ປະຕິບັດດັ່ງນີ້:

- ຂັ້ນສູນກາງ ໃຫ້ສົມທຽບ ແລະ ຢັ້ງຢືນຈາກຄັງເງິນແຫ່ງຊາດ;
- ຂັ້ນທ້ອງຖິ່ນ ໃຫ້ສົມທຽບ ແລະ ຢັ້ງຢືນຈາກຄັງເງິນປະຈຳທ້ອງຖິ່ນ ເພື່ອໃຫ້ພະແນກການເງິນ (ຂະແໜງງົບປະມານ) ແລະ ຂະແໜງສ່ວຍສາອາກອນ ສັງລວມ.

2. ການປິດຮັບເອກະສານຂອງຂະແໜງງົບປະມານ

- ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ນຳສົ່ງເອກະສານຂໍເບີກຈ່າຍງົບປະມານ (ອະນຸມັດ) ບໍ່ໃຫ້ກາຍວັນທີ 12 ທັນວາ 2023 ເຖິງຂະແໜງງົບປະມານ ເພື່ອຄົ້ນຄ້ວາ ອະນຸມັດ ແລະ ສະໂນດສົ່ງ ຄັງເງິນແຫ່ງຊາດ/ຄັງເງິນປະຈຳທ້ອງຖິ່ນ ບໍ່ໃຫ້ກາຍວັນທີ 15 ທັນວາ 2023,ຈາກນັ້ນໃຫ້ປະກອບເອກະສານຂໍຖອນເງິນ (ໃບຂໍຖອນເງິນ) ສົ່ງຄັງເງິນແຫ່ງຊາດ/ຄັງເງິນປະຈຳທ້ອງຖິ່ນ ບໍ່ໃຫ້ກາຍວັນທີ 20 ທັນວາ 2023;

- ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ນຳສົ່ງເອກະສານຂໍເບີກຈ່າຍງົບປະມານ (ຄຳສັ່ງຈ່າຍ) ບໍ່ໃຫ້ກາຍວັນທີ 15 ທັນວາ ປີ 2023 ເຖິງຂະແໜງງົບປະມານແຫ່ງລັດ ເພື່ອຄົ້ນຄ້ວາ ອອກຄຳສັ່ງຈ່າຍ ແລະ ສະໂນດສົ່ງຄັງເງິນແຫ່ງຊາດ/ຄັງເງິນປະຈຳທ້ອງຖິ່ນ ບໍ່ໃຫ້ກາຍວັນທີ 20 ທັນວາ 2023;

3. ລາຍຈ່າຍລົງທຶນຂອງລັດ ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ (ເຈົ້າຂອງໂຄງການ) ສະຫຼຸບການຈັດຕັ້ງປະຕິບັດລາຍຈ່າຍດັ່ງກ່າວ ປະຈຳງວດ ແລະ ປີ ເປັນໂຄງການລະອຽດ ໂດຍແຍກໃຫ້ເຫັນແຫຼ່ງທຶນ ( ປົກກະຕິ, ວິຊາການ, ທຶນນ້ຳເທີນສອງ, ຊ່ວຍເຫຼືອລ້າ ແລະ ເງິນກູ້ຢືມ) ສົ່ງໃຫ້ຂະແໜງການເງິນ ແລະ ຂະແໜງແຜນການ ແລະ ການລົງທຶນ;

4. ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການຮີບຮ້ອນ ສະຫຼຸບງົບປະມານເບື້ອງຕົ້ນ (ສູນໂມງ) ແລະ ປິດສະຫຼຸບຂາດຕົວງົບປະມານແຫ່ງລັດ ໃຫ້ໄປຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ທີ່ໄດ້ກຳນົດ;

5. ກຳນົດເວລາສົ່ງບົດສະຫຼຸບການຈັດຕັ້ງປະຕິບັດງົບປະມານ: ໃຫ້ບັນດາກະຊວງ, ອົງການທຽບເທົ່າ ແລະ ພະແນກການເງິນແຂວງ, ນະຄອນຫຼວງ ປະຕິບັດດັ່ງນີ້:

- ນຳສົ່ງບົດສະຫຼຸບການຈັດຕັ້ງປະຕິບັດງົບປະມານເບື້ອງຕົ້ນ (ສູນໂມງ) ປະຈຳປີ 2023 ພ້ອມທັງຕີລາຄາຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສາຍເຫດ, ບົດຮຽນທີ່ຖອດຖອນໄດ້ ແລະ ການສະເໜີວິທີແກ້ໄຂໃນຕໍ່ໜ້າ ໃຫ້ຄັງເງິນແຫ່ງຊາດ ກ່ອນວັນທີ 20 ມັງກອນ 2024 ເພື່ອສັງລວມການສະຫຼຸບທົ່ວປະເທດ ນຳສົ່ງກົມງົບປະມານແຫ່ງລັດ ກ່ອນວັນທີ 30 ມັງກອນ 2024 ເພື່ອຮ່າງບົດລາຍງານລັດຖະບານ ພິຈາລະນາ;
- ນຳສົ່ງບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານ ປະຈຳປີ 2023 ຂອງຕົນ ໂດຍຜ່ານການໄລ່ລຽງ ແລະ ໄດ້ຮັບການຢັ້ງຢືນຈາກ ຄັງເງິນແຫ່ງຊາດ/ຄັງເງິນປະຈຳທ້ອງຖິ່ນ ຢ່າງຊ້າບໍ່ໃຫ້ກາຍວັນທີ 30 ເມສາ 2024 ເພື່ອໃຫ້ຄັງເງິນແຫ່ງຊາດ ສາມາດສັງລວມຕາຕະລາງສະຫຼຸບຂາດຕົວງົບປະມານແຫ່ງລັດທົ່ວປະເທດ ແລ້ວນຳສົ່ງ ກົມງົບປະມານແຫ່ງລັດ ເພື່ອຮ່າງບົດລາຍງານການສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳປີ 2023 ເພື່ອສະເໜີລັດຖະບານພິຈາລະນາ ກ່ອນວັນທີ 30 ມິຖຸນາ 2024.

**VIII. ມາດຕະການຕໍ່ຜູ້ລະເມີດ**: ກົມກວດກາ ກະຊວງການເງິນ ສົມທົບກັບ ອົງການສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ພາກ ສ່ວນກ່ຽວຂ້ອງ ຄົ້ນຄ້ວາກຳນົດມາດຕະການເດັດຂາດຕໍ່ຫົວໜ່ວຍງົບປະມານ, ພະນັກງານຄຸ້ມຄອງເກັບລາຍຮັບ-ລາຍຈ່າຍ ທີ່ລະເມີດວິໄນການເງິນ ເພື່ອແກ້ໄຂປະກົດການຫຍໍ້ທໍ້ໃຫ້ຫຼຸດລົງຢ່າງຕັ້ງໜ້າ ເປັນຕົ້ນ ມາດຕະການເກັບກູ້ຄືນ, ການຫຼຸດ ຫຼື ຕັດລາຍຈ່າຍໃນປີຕໍ່ໄປ, ມາດຕະການລົງວິໄນ ແລະ ມາດຕະການອື່ນໆ ຕາມທີ່ກົດໝາຍ ແລະ ລະບຽບການກ່ຽວຂ້ອງໄດ້ກຳນົດ.

## IX. ການຈັດຕັ້ງຜັນຂະຫຍາຍ

1. ບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຈົ່ງຮັບຮູ້ ແລະ ນຳພາ-ຊີ້ນຳຂະແໜງການທີ່ຕົນຄຸ້ມຄອງ ເພື່ອຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ພ້ອມທັງ ຈັດຕັ້ງເຜີຍແຜ່ຄຳແນະນຳລະອຽດຕາມຂະແໜງການວິຊາສະເພາະ ແລະ ເມືອງຂອງຕົນ ຢ່າງເຂັ້ມງວດ;
2. ສຳລັບມາດຕະການ ແລະ ວິທີການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍລະອຽດ ມອບໃຫ້ກົມກ່ຽວຂ້ອງ ຂອງ ກະຊວງການເງິນ ອອກເປັນຄຳແນະນຳທາງດ້ານວິຊາການໃນການຈັດຕັ້ງປະຕິບັດຂອງຂະແໜງການຕົນຕື່ມ ແລ້ວສົ່ງໃຫ້ກົມງົບປະມານແຫ່ງລັດ ເພື່ອສັງລວມລາຍງານຢ່າງເປັນປົກກະຕິ;
3. ໃຫ້ກະຊວງການເງິນ ແຕ່ງຕັ້ງຄະນະລົງໄປຊຸກຍູ້, ແນະນຳ, ຕິດຕາມ ກວດກາການຈັດຕັ້ງປະຕິບັດທາງດ້ານວິຊາການ ແລະ ລາຍງານຄວາມຄືບໜ້າໃຫ້ລັດຖະບານ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ